*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, 03F, 348-355*
*https://doi.org/10.69692/SUJMRD1203F348*

# Guidelines For Developing 21$^{St}$ Century Skills for Administrators in Secondary Schools of Shikhodttabong District, Vientiane Capital

Viengpanh Xayalath[1*], Nieo Silavong[2], Keomany Makvilay[3]
[1,2,3] *Faculty of Education, National University of Laos*

*Corresponding: Viengpanh Xayalath, *Master's Degree Student, Faculty of Education, National University of Laos, Email: viengphan293@gmail.com*

***Article Info:***
***Submitted: August 25, 2026***
***Revised: August 27, 2026***
***Accepted: September 2, 2026***

**Abstract**

The purpose of this study was to (1) examine the current status of administrative skills of secondary school administrators in the 21st century in Sikhottabong District, Vientiane Capital; (2) explore methods for developing these skills; and (3) evaluate the proposed methods. The study was conducted in three phases and focused on four key areas of administrative skills: communication skills, interpersonal skills, analytical and creative thinking skills, and technological and digital skills. A total of 159 administrators and teachers participated across the three phases, including 140 participants in Phase 1, 10 participants in Phase 2, and 9 participants in Phase 3. The research instruments consisted of questionnaires and evaluation forms. Data were analyzed using frequency, percentage, mean, and standard deviation. A two-level rating scale was used to assess the feasibility and appropriateness of the proposed methods.

The findings revealed that: (1) the overall level of administrative skills of secondary school administrators in the 21st century was high. All four dimensions were also rated at a high level, with communication skills receiving the highest mean score, followed by interpersonal skills, analytical and creative thinking skills, and technological and digital skills, respectively. (2) The proposed methods emphasized administrators serving as role models through holistic self-development, continuous learning, and motivation. The methods also included strengthening analytical and interpretive thinking, supporting personnel in effectively using tools, instructional media, and digital technologies for school operations, applying effective communication strategies to promote shared understanding and organizational collaboration, and organizing social and professional activities to strengthen relationships and external networks. (3) The evaluation of the proposed methods indicated that their overall feasibility and appropriateness were at a high level. These findings suggest that the proposed methods can provide guidance for strengthening the administrative skills of secondary school administrators and enhancing effective school management in the 21st century.

**Keywords:** *School administrator, 21$^{st}$ century skill, Status of school administrator*

## 1. ພາກສະເໜີ

ການພັດທະນາຊັບພະຍາກອນມະນຸດ ໃຫ້ເປັນກຳລັງການຜະລິດຕົ້ນຕໍ ທີ່ສາມາດຕອບສະໜອງ ຕໍ່ການພັດທະນາເສດຖະກິດ-ສັງຄົມຢ່າງຍືນຍົງ ຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝ, ສາມາດເຊື່ອມໂຍງ ແລະ ແຂ່ງຂັນກັບພາກພື້ນ ແລະ ສາກົນ ໄດ້ທັງປະລິມານ ແລະ ຄຸນນະພາບ, ເຮັດໃຫ້ປະຊາຊົນສາມາດເຂົ້າເຖິງການບໍລິການທາງ ສັງຄົມຢ່າງທົ່ວເຖິງ ແລະ ຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ (ກະຊວງສຶກສາທິການ ແລະ ກິລາ, 2016). ປັດຈຸບັນ, ວິທະຍາສາດ-ເຕັກໂນໂລຊີ ໄດ້ມີການພັດທະນາຢ່າງກ້າວກະໂດດ; ສະນັ້ນ, ສປປ ລາວ ພວກເຮົາ ຄວນນຳໃຊ້ກາລະໂອກາດນີ້ ເປັນທ່າແຮງອັນສຳຄັນໃນການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນ ການນຳໃຊ້ວິທະຍາສາດ-ເຕັກໂນໂລຊີເຂົ້າໃນການຜະລິດ , ການບໍລິການ ແລະ ການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ (ກະຊວງແຜນການ ແລະ ການລົງທຶນ, 2021). ພ້ອມກັນນັ້ນ, ກະຊວງສຶກສາທິການ ແລະ ກິລາຍັງໄດ້ກຳນົດຈຸດປະສົງດ້ານນະໂຍບາຍທີ່ເປັນບຸລິມະສິດສຳລັບແຜນພັດທະນາການສຶກສາ ແລະ ກິລາ 2021-2025 ເຊິ່ງມີຈຸດປະສົງລວມຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແມ່ນແນໃສ່ພັດທະນາລະບົບການສຶກສາເພື່ອສ້າງຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິບັດ ແລະ ມີຄ່ານິຍົມທີ່

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/*

ຖືກຕ້ອງ, ມີນ້ຳໃຈຮັກປະເທດຊາດ, ຊື່ສັດບໍລິສຸດ, ມີລະບຽບວິໄນ, ມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈທີ່ດີ, ມີຄວາມສາມັກຄີພາຍໃນຊາດ, ມີຄວາມຮັກຕໍ່ການຮຽນຮູ້ຕະຫຼອດຊີວິດ, ມີຄ່ານິຍົມຕໍ່ປະເພນີອັນດີງາມຂອງຊາດ, ຮັກຄວາມກ້າວໜ້າ ແລະ ມີວິທະຍາສາດເພື່ອໃຫ້ກາຍເປັນກຳລັງແຮງງານທີ່ມີຄຸນນະພາບ, ສອດຄ່ອງ ແລະ ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການຂະຫຍາຍຕົວທາງດ້ານເສດຖະກິດຂອງຊາດທີ່ຍືນຍົງ, ມີຄວາມພ້ອມທີ່ຈະຮ່ວມມື ແລະ ແຂ່ງຂັນກັບບັນດາປະເທດໃນພາກພື້ນ (ກະຊວງສຶກສາທິການ ແລະ ກິລາ, 2020) . ໄລຍະທີ່ຜ່ານມາການບໍລິຫານໂຮງຮຽນໄດ້ມີການພັດທະນາເປັນກ້າວໆ ແລະ ມີຜົນສຳເລັດຫຼາຍຢ່າງເຊັ່ນ: ໃນສົກຮຽນປີ 2024-2025 ຫ້ອງການສຶກສາທິການ ແລະ ກິລາ ເມືອງສີໂຄດຕະບອງ ໄດ້ເຮັດວຽກງານສຶກສາອົບຮົມການເມືອງແນວຄິດໃຫ້ແກ່ພະນັກງານ, ຄູ-ອາຈານ, ໄດ້ປັບປຸງ ແລະ ຍົກສູງຄຸນນະພາບລະບົບບໍລິຫານ ແລະ ຄຸ້ມຄອງເພື່ອແນ່ໃສ່ປັບປຸງປະສິດທິຜົນໃນການບໍລິຫານ ແລະ ຄຸ້ມຄອງໃຫ້ໄດ້ດີກວ່າເກົ່າ ເຊິ່ງໃນຄວາມເປັນຈິງແລ້ວການບໍລິຫານ ແລະ ຄຸ້ມຄອງແບບເກົ່າອາດຈະບໍ່ສອດຄ່ອງກັບຍຸກສະໄໝ (ຫ້ອງການສຶກສາທິການ ແລະ ກິລາເມືອງສີໂຄດຕະບອງ, 2025), ດັ່ງນັ້ນ, ຜູ້ບໍລິການການສຶກສາໃນຍຸກໃໝ່ຄວນເອົາໃຈໃສ່ ທັກສະທີ່ເຊື່ອວ່າມີຄວາມຈຳເປັນທີ່ສຸດກໍ່ຄືທັກສະຂອງຄົນໃນສະຕະວັດທີ 21 ເວົ້າລວມ ແລະ ຜູ້ບໍລິຫານການສຶກສາ ເວົ້າສະເພາະ ຕາມແນວຄວາມຄິດຂອງອົງການອຸຍເນສໂກແມ່ນຄົນຍຸກໃໝ່ມີທັກສະໃນການດຳລົງຊີວິດໃນສະຕະວັດທີ 21 (21century skill) 3Rs ໄດ້ແກ່: ການອ່ານ (Reading), ການຂຽນ (Writing) ແລະ ການຄິດໄລ່ເລກ (Arithmetic's), ທັກສະ 4Cs ໄດ້ແກ່: ທັກສະການຄິດແບບມີວິຈາລະຍານ (Critical thinking), ການສື່ສານ (Communication), ການຮ່ວມມື (Collaboration) ແລະ ແນວຄວາມຄິດສ້າງສັນ (Creatively) (Tony, 2008, p. 14). ເຖິງຢ່າງໃດກໍ່ຕາມຄຽງຄູ່ກັບຜົນສຳເລັດ ປະສະຈາກບໍ່ໄດ້ບັນຫາ ແລະ ສິ່ງທ້າທາຍພວກເຮົາກໍຍັງເຫັນຜູ້ບໍລິຫານໂຮງຮຽນຈຳນວນໜຶ່ງກໍ່ຍັງເຮັດວຽກບໍ່ໄດ້ຮັບປະສິດທິພາບເທົ່າທີ່ຄວນ ເຊິ່ງເຫັນໄດ້ບັນຫາ ແລະ ສິ່ງທ້າທາຍຫຼາຍຢ່າງເຊັ່ນ: ຜ່ານການສຶກສາ ແລະ ຕີລາຄາສະພາບການຈັດຕັ້ງປະຕິບັດວຽກງານຈຸດສຸມທີ່ເປັນບູລິມະສິດຕ່າງໆ ທີ່ກຳນົດໃນແຜນ ; ປະສິດທິພາບໃນການນຳໃຊ້ຊັບພະຍາກອນຍັງບໍ່ທັນສູງເທົ່າທີ່ຄວນ, ຜູ້ບໍລິຫານໂຮງຮຽນມັດທະຍົມບາງແຫ່ງຍັງຂາດຄວາມຮູ້ຄວາມເຂົ້າໃຈ, ບໍ່ສາມາດຕອບໂຕ້ໃຫ້ທັນກັບສະພາບ ເຊິ່ງມັນໄດ້ສົ່ງຜົນໃຫ້ຄຸນນະພາບການສຶກສາຊ້າ, ບໍ່ໄປໃນລວງດຽວກັນເປັນຕົ້ນແມ່ນ ຄວາມຮັບຜິດຊອບ ແລະ ຄວາມເປັນເຈົ້າການຂອງການບໍລິຫານການສຶກສາຈຳນວນໜຶ່ງ ໃນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນຍັງບໍ່ສູງ; ການລົງຊຸກຍູ້ ຕິດຕາມການຈັດການສຶກສາ ຂອງຜູ້ບໍລິຫານການສຶກສາ ຂັ້ນໂຮງຮຽນ ຈຳນວນໜຶ່ງ ຍັງບໍ່ທັນມີຈຸດສຸມ ແລະ ເຮັດເປັນບາງພາກສ່ວນຍັງບໍ່ທັນເປັນເຈົ້າການໃນການຜັນຂະຫຍາຍຂອບແນວຄວາມຄິດສ້າງການຫັນປ່ຽນຂອງຂະແໜງການສຶກສາ ແລະ ກິລາ ເຂົ້າໃນວຽກຕົວຈິງຂອງຕົນຢ່າງມີຈຸດສຸມ ແລະ ເປັນຮູບປະທຳແທ້, ການສ້າງການຫັນປ່ຽນໃຫມ່ບາງດ້ານບໍ່ເກີດຂຶ້ນໄດ້ຢ່າງໄວວາ ໂດຍສະເພາະບາງດ້ານທີ່ຕິດພັນກັບການປ່ຽນແປງດ້ານແນວຄິດຈິນຕະນາການຕໍ່ການສ້າງການຫັນປ່ຽນໃຫມ່ ໃຫ້ທັນກັບຄວາມຮຽກຮ້ອງຕ້ອງການຂອງວຽກ ແລະ ການຊຸກຍູ້, ຕິດຕາມ, ຈັດຕັ້ງເຜີຍແຜ່ກ່ຽວກັບວິໄສທັດ ຍັງບໍ່ທັນໄດ້ດີ. ການຊອກຫາຂໍ້ມູນ, ທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງພາຍໃນປະເທດ ຍັງຈຳກັດ ແລະ ຜູ້ຄົ້ນຄວ້າຍັງ ຂາດປະສົບການໃນການວິເຄາະຂໍ້ມູນ.

ດັ່ງນັ້ນ, ຈຶ່ງກຳນົດຈຸດປະສົງຂອງການຄົ້ນຄວ້າ: 1) ເພື່ອສຶກສາສະພາບການພັດທະນາທັກສະຂອງຜູ້ບໍລິຫານໃນຍຸກສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ, 2) ເພື່ອສຶກສາແນວທາງໃນການພັດທະນາທັກສະຂອງຜູ້ບໍລິຫານ ໃນຍຸກສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ແລະ 3) ເພື່ອປະເມີນແນວທາງໃນການພັດທະນາທັກສະຂອງຜູ້ບໍລິຫານ ໃນຍຸກສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ.

## 2. ອຸປະກອນ ແລະ ວິທີການ

### 2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນ ໄລຍະທີ 1: ທີ່ຈະເປັນຜູ້ໃຫ້ຂໍ້ມູນກ່ຽວກັບສະພາບທັກສະ ແລະ ຂໍ້ສະເໜີແນະເພີ່ມເຕີມກ່ຽວກັບແນວທາງໃນການພັດທະນາທັກສະຂອງຜູ້ບໍລິຫານການສຶກສາ ໂຮງຮຽນມັດທະຍົມສຶກສາ ໃນສະຕະວັດທີ 21 ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ຈຳນວນ ທັງໝົດ 4 ແຫ່ງ ແມ່ນເປົ້າໝາຍລວມທັງໝົດ 140 ທ່ານ. ຜູ້ໃຫ້ຂໍ້ມູນແມ່ນກຸ່ມຄະນະອຳນວຍການ ຈຳນວນ 11 ທ່ານ ແລະ ຄູສອນ 129 ຄົນ ຈາກ 4 ໂຮງຮຽນ ຄື: ໂຮງຮຽນ ມັດທະຍົມສຶກສາສົມບູນ ຈັນສະຫວ່າງ, ມັດທະຍົມສຶກສາສົມບູນ ເກົ້າລຽ້ວ, ມັດທະຍົມສຶກສາຕອນປາຍ ວຽງຈັນໂຮຈິມິນ, ມັດທະຍົມສຶກສາຕອນປາຍ ທົ່ງປົ່ງ.

ກຸ່ມຕົວຢ່າງ ໄລຍະທີ 2: ທີ່ຈະເຂົ້າຮ່ວມກອງປະຊຸມສົນທະນາກຸ່ມຕໍ່ກັບການຄົ້ນຄວ້າໄດ້ກຳນົດເອົາ ຄະນະອຳນວຍການໂຮງຮຽນ ໂດຍການເລືອກແບບເຈາະຈົງ (Purposive sampling) ຈາກ 4 ໂຮງຮຽນ ພາກສ່ວນລະ 2 ຄົນ ຄື: ໂຮງຮຽນ ມັດທະຍົມສຶກສາສົມບູນ ຈັນສະຫວ່າງ, ມັດທະຍົມສຶກສາສຶກສາຕອນຕົ້ນ ເກົ້າລຽ້ວ, ມັດທະຍົມສຶກສາຕອນປາຍ ວຽງຈັນ-ໂຮຈິມິນ ແລະ ມັດທະຍົມສຶກສາຕອນປາຍ ທົ່ງປົ່ງ, ຄະນະຫ້ອງການສຶກສາທິການ ແລະ ກິລາເມືອງ 2 ທ່ານ ລວມທັງໝົດຈຳນວນ 10 ທ່ານ;

ກຸ່ມຕົວຢ່າງ ໄລຍະທີ 3: ທີ່ໃຊ້ເຂົ້າໃນການຄົ້ນຄວ້າໄດ້ ກຳນົດເອົາຜູ້ດຳລົງຕຳແໜ່ງບໍລິຫານ ຈຳນວນ 9 ທ່ານ ປະກອບມີ: ຄະນະຫ້ອງການສຶກສາທິການ ແລະ ກິລາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ຈຳນວນ 1 ທ່ານ ແລະ ຄະນະອຳນວຍການໂຮງຮຽນທັງ 4 ແຫ່ງ, ໂຮງຮຽນມັດທະຍົມສຶກສາສົມບູນ ຈັນສະຫວ່າງ ຈຳນວນ 2 ທ່ານ, ມັດທະຍົມສຶກສາສົມບູນ ເກົ້າລ້ຽວ ຈຳນວນ 2 ທ່ານ, ມັດທະຍົມສຶກສາຕອນປາຍ ທົ່ງປົ່ງ ຈຳນວນ 2 ທ່ານ ແລະ ມັດທະຍົມສຶກສາຕອນປາຍ ວຽງຈັນ-ໂຮຈິມິນ ຈຳນວນ 2 ທ່ານ ລວມທັງໝົດ ຈຳນວນ 9 ທ່ານ.

2.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການສຶກສາຄັ້ງນີ້ເປັນແບບສອບຖາມກ່ຽວກັບແນວທາງໃນການພັດທະນາທັກສະ ຂອງຜູ້ບໍລິຫານໃນສະຕະວັດທີ 21 ຂອງໂຮງຮຽນ ມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ເຊິ່ງປະກອບດ້ວຍ 2 ຕອນຄື:

ຕອນທີ 1 ເປັນແບບສອບຖາມກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ເຊິ່ງເປັນແບບກວດສອບລາຍການ (Check list) ໂດຍສອບຖາມກ່ຽວກັບ ເພດ, ປະສົບການເຮັດວຽກ, ຕຳແໜ່ງ ແລະ ວຸດທິການສຶກສາ.

ຕອນທີ 2 ເປັນແບບສອບຖາມແນວທາງໃນການພັດທະນາທັກສະ ຂອງຜູ້ບໍລິຫານໃນສະຕະວັດທີ 21 ຂອງໂຮງຮຽນ ມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ມີທັກສະ 4 ດ້ານ ດັ່ງນີ້: 1) ທັກສະດ້ານການສື່ສານ, 2) ທັກສະດ້ານມະນຸດສຳພັນ, 3) ທັກສະດ້ານການຄິດວິເຄາະ ແລະ ຄວາມຄິດສ້າງສັນ, 4) ທັກສະດ້ານເຕັກໂນໂລຊີ ແລະ ດິຈິຕອນ. ເຊິ່ງເປັນລັກສະນະມາດຕາສ່ວນປະເມີນຄ່າ (Rating Scale) 5 ລະດັບ ຂອງ (ບຸນຊົມ ສີສະອາດ, 2011) ດັ່ງນີ້:

ຄະແນນ 5 ໝາຍເຖິງ ທັກສະຂອງຜູ້ບໍລິຫານ ຢູ່ໃນລະດັບ ຫຼາຍທີ່ສຸດ

ຄະແນນ 4 ໝາຍເຖິງ ທັກສະຂອງຜູ້ບໍລິຫານ ຢູ່ໃນລະດັບ ຫຼາຍ

ຄະແນນ 3 ໝາຍເຖິງ ທັກສະຂອງຜູ້ບໍລິຫານ ຢູ່ໃນລະດັບ ປານກາງ

ຄະແນນ 2 ໝາຍເຖິງ ທັກສະຂອງຜູ້ບໍລິຫານ ຢູ່ໃນລະດັບ ໜ້ອຍ

ຄະແນນ 1 ໝາຍເຖິງ ທັກສະຂອງຜູ້ບໍລິຫານ ຢູ່ໃນລະດັບ ໜ້ອຍທີ່ສຸດ

ຕອນທີ 3 ເປັນຂໍ້ຄຳຖາມແບບປາຍເປີດ (Open ended Questionnaire) ເປັນການສອບຖາມຄວາມຄິດເຫັນເພີ່ມເຕີມກ່ຽວກັບແນວທາງໃນການພັດທະນາທັກສະ ຂອງຜູ້ບໍລິຫານການສຶກສາ ໃນສະຕະວັດທີ 21 ຂອງໂຮງຮຽນ ມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ.

2.3 ການຊອກຫາຄຸນນະພາບເຄື່ອງມື

ຜູ້ຄົ້ນຄວ້ານຳແບບສອບຖາມທີ່ໄດ້ປັບປຸງຕາມຄຳເຫັນຂອງຄູທີ່ປຶກສາແລ້ວ ນຳໄປໃຫ້ຜູ້ຊ່ຽວຊານ ຈຳນວນ 5 ທ່ານ ເພື່ອພິຈາລະນາກວດສອບ ແລະ ປະເມີນຄວາມຖືກຕ້ອງດ້ານເນື້ອໃນ (Content Validity) ຂອງແບບສອບຖາມແຕ່ລະຂໍ້ກ່ຽວກັບຈຸດປະສົງ ແລະ ນິຍາມສັບຂອງການຄົ້ນຄວ້າ ໂດຍປະເມີນຄ່າ ດັດຊະນີຄວາມສອດຄ່ອງເປັນແຕ່ລະຂໍ້ ເຊິ່ງອີງໃສ່ເກນພິຈາລະນາ ດັ່ງນີ້:

+1 ຄະແນນ ແນ່ໃຈວ່າ ຂໍ້ຄຳຖາມມີຄວາມສອດຄ່ອງທາງດ້ານເນື້ອໃນ ແລະ ນິຍາມສັບ.

0 ຄະແນນ ບໍ່ແນ່ໃຈວ່າ ຂໍ້ຄຳຖາມມີຄວາມສອດຄ່ອງທາງດ້ານເນື້ອໃນ ແລະ ນິຍາມສັບ ຫຼື ບໍ່.

-1 ຄະແນນ ແນ່ໃຈວ່າ ຂໍ້ຄຳຖາມ ບໍ່ມີຄວາມສອດຄ່ອງທາງດ້ານເນື້ອໃນ ແລະ ນິຍາມສັບ

ຫຼັງຈາກນັ້ນເອົາແບບສອບຖາມດັ່ງກ່າວມາຫາຄ່າດັດຊະນີຄວາມສອດຄ່ອງ ລະຫວ່າງຈຸດປະສົງ ກັບຂໍ້ຄຳຖາມ (Index of Item Objective Congruence: IOC) ແບບສອບຖາມທີ່ມີຄ່າ IOC ໄດ້ຄ່າຄວາມສອດຄ່ອງ ແຕ່ 0.80 ຫາ 1.00.

- ປັບປຸງແບບສອບຖາມ ແລະ ສະເໜີຕໍ່ອາຈານທີ່ປຶກສາເພື່ອພິຈາລະນາອີກຄັ້ງໜຶ່ງ.

- ນຳເອົາແບບສອບຖາມໄປທົດລອງໃຊ້ (Try out) ກັບຜູ້ບໍລິຫານ ແລະ ຄູສອນ ທີ່ບໍ່ແມ່ນກຸ່ມເປົ້າໝາຍທີ່ສຶກສາ ຈຳນວນ 30 ທ່ານ ແນວທາງໃນການພັດທະນາທັກສະ ຂອງຜູ້ບໍລິຫານໃນສະຕະວັດທີ 21 ຂອງໂຮງຮຽນ ມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ. ເພື່ອຫາຄ່າຄວາມເຊື່ອໝັ້ນ (Reliability) ຂອງແບບສອບຖາມທັງຊຸດ ໂດຍໃຊ້ວິທີການສຳປະສິດຂອງແອວຟາ ($\alpha -$ Coefficient) ຕາມວິທີຂອງຄອນບາກ (Cronbach) ໄດ້ຄ່າລະດັບຄວາມເຊື່ອໝັ້ນຂອງແບບສອບຖາມທັງສະບັບ 0.89.

ໂດຍນຳໃຊ້ສູດດັ່ງນີ້: $\alpha=\frac{n}{n-1}\left[1-\frac{\sum s_i^2}{s_t^2}\right]$

- ເມື່ອວ່າ $\sum s_i^2$ ແມ່ນຜົນລວມຂອງຄວາມຜັນປ່ຽນແຕ່ລະຂໍ້

- $s_t^2$ ແມ່ນຄວາມຜັນປ່ຽນລວມ

- n ແມ່ນຈຳນວນຂໍ້

3) ປັບປຸງແບບສອບຖາມ ແລະ ຈັດພິມເປັນສະບັບສົມບູນເພື່ອນຳໄປເກັບກຳຂໍ້ມູນນຳກຸ່ມເປົ້າໝາຍ.

2.4 ວິທີການເກັບກຳຂໍ້ມູນ

ຜູ້ຄົ້ນຄວ້າໄດ້ດຳເນີນການເກັບກຳຂໍ້ມູນ ແລະ ຮວບຮວມຂໍ້ມູນ ໃນໄລຍະທີ 2 ດັ່ງນີ້:

1) ຜູ້ຄົ້ນຄວ້າຂໍໜັງສືສະເໜີຈາກຄະນະບໍດີ ຄະນະສຶກສາສາດມະຫາວິທະຍາໄລແຫ່ງຊາດ.

2) ນຳເອົາໜັງສືອະນຸມັດເກັບກຳຂໍ້ມູນ ຈາກຄະນະບໍດີ ຄະນະສຶກສາສາດຜູ້ຄົ້ນຄວ້າໄດ້ຕິດຕໍ່ປະສານງານຫາ ຄະນະອຳນວຍການໂຮງຮຽນມັດທະຍົມສຶກສາ 4 ແຫ່ງ ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ ເພື່ອຂໍອະນຸມັດໃນການດຳເນີນການເກັບກຳ ແລະ ຮວບຮວມຂໍ້ມູນ ດ້ວຍການຈັດກຸ່ມສົນທະນາ.

3) ດຳເນີນການເກັບກຳຂໍ້ມູນ ໂດຍການ ສົນທະນາກຸ່ມ (Focus Group Discussion) ທີ່ໂຮງຮຽນມັດທະຍົມສຶກສາ 4 ແຫ່ງ ເມືອງ ສີໂຄດຕະບອງນະຄອນຫຼວງວຽງຈັນ

2.5 ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນ ອີງຕາມລັກສະນະຂອງຂໍ້ມູນ ໂດຍນຳໃຊ້ໂປຣແກຣມຄອມພິວເຕີສຳເລັດຮູບ ເຊິ່ງລາຍລະອຽດດັ່ງນີ້:

ຕອນທີ 1 ວິເຄາະຂໍ້ມູນກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ໂດຍການຫາຄ່າຄວາມຖີ່ ແລະ ຫາຄ່າສ່ວນຮ້ອຍ (%).

ຕອນທີ 2 ວິເຄາະຂໍ້ມູນແບບສອບຖາມກ່ຽວກັບແນວທາງການພັດທະນາທັກສະຂອງຜູ້ໃນສະຕະວັດທີ 21 ເມືອງສີໂຄດ ຕະບອງນະຄອນຫຼວງວຽງຈັນ 4 ດ້ານ ຄື: 1) ທັກສະດ້ານການສື່ສານ, 2) ທັກສະດ້ານມະນຸດສຳພັນ, 3) ທັກສະດ້ານການຄິດວິເຄາະ ແລະ ຄວາມຄິດສ້າງສັນ, 4) ທັກສະດ້ານເຕັກໂນໂລຊີ ແລະ ດິຈິຕອນ. ໂດຍການຫາຄ່າສະເລ່ຍ ($\mu$) ແລະ ຫາຄ່າສ່ວນຜັນປ່ຽນມາດຕະຖານ ($\sigma$) ໂດຍລວມ ແລະ ແຕ່ລະດ້ານ ໂດຍອີງຕາມເກນການແປຄວາມໝາຍຂອງ (ບຸນຊົມ ສີສະອາດ, 2011, ໜ້າ. 121) ໂດຍຜູ້ຄົ້ນຄວ້າໄດ້ອີງໃສ່ເກນໃນການແປຜົນດັ່ງນີ້:

4.51 - 5.00 ໝາຍເຖິງ ທັກສະຂອງຜູ້ບໍລິຫານ ຢູ່ໃນລະດັບຫຼາຍທີ່ສຸດ

3.51 - 4.50 ໝາຍເຖິງ ທັກສະຂອງຜູ້ບໍລິຫານ ຢູ່ໃນລະດັບຫຼາຍ

2.51 - 3.50 ໝາຍເຖິງ ທັກສະຂອງຜູ້ບໍລິຫານ ຢູ່ໃນລະດັບປານກາງ

1.51 - 2.50 ໝາຍເຖິງ ທັກສະຂອງຜູ້ບໍລິຫານ ຢູ່ໃນລະດັບໜ້ອຍ

1.00 - 1.50 ໝາຍເຖິງ ທັກສະຂອງຜູ້ບໍລິຫານ ຢູ່ໃນລະດັບໜ້ອຍທີ່ສຸດ

**3. ຜົນໄດ້ຮັບ:**

3.1 ຜົນການວິເຄາະສະພາບການພັດທະນາທັກສະຂອງຜູ້ບໍລິຫານໃນຍຸກສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງນະຄອນຫຼວງວຽງຈັນ ພົບວ່າ

ສະພາບການພັດທະນາທັກສະການບໍລິຫານຂອງຜູ້ບໍລິຫານໃນສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ທັງ 4 ດ້ານ ໂດຍລວມຢູ່ໃນລະດັບຫຼາຍ ($\mu$=4.28, $\sigma$=0.35) ເມື່ອພິຈາລະນາເປັນລາຍດ້ານ ພົບວ່າ ທຸກດ້ານ ຢູ່ໃນລະດັບຫຼາຍ ລຽງຄ່າສະເລ່ຍແຕ່ສູງຫາໜ້ອຍ ຄື: ທັກສະດ້ານການສື່ສານ ($\mu$=4.35, $\sigma$=0.33), ທັກສະດ້ານການຄິດວິເຄາະ ແລະ ຄວາມຄິດສ້າງສັນ ( $\mu$=4.32, $\sigma$=0.34), ທັກສະດ້ານມະນຸດສຳພັນ ( $\mu$=4.28, $\sigma$ =0.36) ແລະ ດ້ານທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ ແມ່ນທັກສະດ້ານເຕັກໂນໂລຊີ ແລະ ດິຈິຕອນ ( $\mu$=4.20, $\sigma$=0.37).

3.2 ຜົນການວິເຄາະແນວທາງໃນການພັດທະນາທັກສະຂອງຜູ້ບໍລິຫານໃນຍຸກສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງນະຄອນຫຼວງວຽງຈັນ ພົບວ່າ

(1) ທັກສະດ້ານການສື່ສານ : ຜູ້ບໍລິຫານການສຶກສາ ຄວນຈັດເຝິກອົບຮົມໃນການນຳໃຊ້ວິທີການສື່ສານ ຫຼື ເຊີນຜູ້ມີຄວາມຮູ້ຈາກພາຍນອກ, ຄວນສ້າງຂະບວນການບຳລຸງຮຽນພາສາອັງກິດ, ຄວນຈັດເຝິກອົບຮົມໃນການນຳໃຊ້ວິທີການສື່ສານ ເຊີນຜູ້ມີຄວາມປະສົບການນຳໃຊ້ວິທີການສື່ສານໃຫ້

ແກ່ຜູ້ບໍລິຫານ, ຄວນຮັບຟັງຢ່າງຕັ້ງໃຈ, ຫາວິທີຕອບຮັບ ແລະ ມີຍຸດທະສາດການແກ້ໄຂຂໍ້ຂັດແຍ່ງ, ຄວນສ້າງໂຄງການໃຫ້ຄໍາປຶກສາທີ່ຜູ້ບໍລິຫານທີ່ມີປະສົບການສາມາດເປັນຄູຝຶກສອນຄົນໃໝ່ໃນການສື່ສານທີ່ມີປະສິດທິພາບ ແລະ ກວດສອບແຫຼ່ງທີ່ມາ, ຄວາມຖືກຕ້ອງຂອງຂໍ້ມູນ, ໃຊ້ເຕັກໂນໂລຊີ, ເຄື່ອງມືຊ່ວຍກວດສອບຄວາມໜ້າເຊື່ອຖືຂອງແຫຼ່ງຂໍ້ມູນ ຫຼື ຂໍຄໍາປຶກສາກັບຜູ້ຊ່ຽວຊານ, ຄວນຈັດກອງປະຊຸມແລກປ່ຽນຄວາມຄິດເຫັນ ແລະ ປະສົບການໃນການປະຕິບັດວຽກງານ- ກໍານົດກຸ່ມເປົ້າໝາຍໃນການເຜີຍແຜ່, ປະຊາສໍາພັນຜ່ານຊ່ອງທາງການສື່ສານທີ່ຕ້ອງການ ແລະ ຄວນແບ່ງປັນຄວາມຄືບໜ້າກ່ຽວກັບຜົນສໍາເລັດທາງວິຊາການ, ກິດຈະກໍາການຮຽນ-ການສອນ ແລະ ກິດຈະກໍານອກຫຼັກສູດ, ຈັດຝຶກອົບຮົມໃຫ້ຜູ້ບໍລິຫານ ແລະ ເຊື້ອເຊີນຜູ້ຊໍານານງານຈາກພາຍນອກ.

(2) ດ້ານທັກສະມະນຸດສໍາພັນ : ຜູ້ບໍລິຫານການສຶກສາ ຄວນຈໍາລອງສ້າງສະຖານະການການຮຽນຮູ້ໃນການແກ້ໄຂບັນຫາຕ່າງໆ ແລະ ວິເຄາະຫາສາເຫດຂອງບັນຫາ ວາງແຜນການແກ້ໄຂບັນຫາຢ່າງມີລະບົບ, ຄວນປະເມີນຄວາມສາມາດ ແລະ ຄວາມຕ້ອງການຂອງບຸກຄະລາກອນ ເພື່ອໝູນໃຊ້ຈຸດແຂງຂອງແຕ່ລະບຸກຄົນເພື່ອຄວາມເໝາະສົມ ແລະ ມີປະສິດທິພາບ.ແລະ ຜູ້ບໍລິຫານຄວນເປີດກວ້າງທັດສະນະ ແລະ ຮັບຟັງຄໍາຄິດເຫັນຈາກຜູ້ໃຕ້ບັງຄັບບັນຊາພ້ອມທັງໃຫ້ຄໍາແນະນໍາດ້ວຍຄວາມຈິງໃຈ, ສ້າງຊ່ອງທາງການສື່ສານທີ່ສອດຄ່ອງລະຫວ່າງໂຮງຮຽນ, ອົງການຈັດຕັ້ງຊຸມຊົນ, ແລະ ພາກສ່ວນກ່ຽວຂ້ອງເພື່ອໃຫ້ທຸກຄົນຮັບຮູ້ ແລະ ມີສ່ວນຮ່ວມ, ຄວນຈັດກິດຈະກໍາການແລກປ່ຽນເພື່ອສັງຄົມແຫ່ງການຮຽນຮູ້, ຄວນສ້າງແຜນໃນການແລກປ່ຽນບົດຮຽນ, ຈັດກິດຈະກໍາການຮຽນຮູ້, ພັດທະນາຫຼັກສູດການຮຽນທັງໃນ ແລະ ນອກຫຼັກສູດຮ່ວມກັນກັບບັນດາໂຮງຮຽນອ້ອມຂ້າງ ແລະ ຊຸມຊົນ ແລະ ມີສ່ວນຮ່ວມໃນກິດຈະກໍາ, ກອງປະຊຸມ, ສະໜັບສະໜູນໂຄງການພັດທະນາຊຸມຊົນ ແລະ ກິດຈະກໍາດ້ານການສຶກສາ ແລະ ສຸຂະພາບຂອງຊຸມຊົນ.

(3) ດ້ານການຄິດວິເຄາະ ແລະ ແນວຄິດສ້າງສັນ : ຜູ້ບໍລິຫານຄວນກໍານົດບັນຫາ, ແລະ ແກ້ໄຂດ້ວຍຂໍ້ມູນ, ສ້າງການເຂົ້າເຖິງເຄື່ອງມືທີ່ຊ່ວຍໃນການວິເຄາະຂໍ້ມູນ, ປະເມີນຜົນ ແລະ ປັບປຸງຂະບວນການວິເຄາະຂໍ້ມູນ, ຄວນຈັດຝຶກອົບຮົມເຊື້ອເຊີນຜູ້ຊ່ຽວຊານຈາກພາຍນອກທີ່ມີຄວາມຮູ້ການຄິດ ແລະ ວິເຄາະຢ່າງເປັນລະບົບ. ຄວນຈໍາລອງສ້າງສະຖານະການການຮຽນຮູ້ໃນການແກ້ໄຂບັນຫາຕ່າງໆ, ວິເຄາະຫາສາເຫດຂອງບັນຫາ ວາງແຜນການແກ້ໄຂບັນຫາຢ່າງມີລະບົບ ແລະ ຜູ້ບໍລິຫານຄວນຮຽນຮູ້ການຄົ້ນຄິດສິ່ງໃໝ່ໆ ແລະ ຄວນມີການຈັດຝຶກອົບຮົມເຊື້ອເຊີນຜູ້ຊໍານານງານຈາກພາຍນອກ

(4) ດ້ານການໃຊ້ເຕັກໂນໂລຊີ ແລະ ດິຈິຕອນ: ຜູ້ບໍລິຫານຄວນສົ່ງເສີມການໃຊ້ເຄື່ອງມືອອນລາຍ Google Docs, Google Sheets ຫຼື Microsoft Teams ເພື່ອໃຫ້ຄູໄດ້ເຮັດວຽກຮ່ວມກັນ ຫຼື ຮ່ວມກັບນັກຮຽນໄດ້ທຸກເວລາ, ມີວາງແຜນກໍານົດເວລາ, ວາລະ, ຈຸດປະສົງການປະຊຸມໃຫ້ຊັດເຈນ, ຄວນຈັດການປະເມີນຄວາມຮູ້ເບື້ອງຕົ້ນ, ຈັດຝຶກອົບຮົມພາຍໃນ ຫຼື ເຊື້ອເຊີນຜູ້ຊໍານານງານຈາກພາຍນອກ, ຄວນເຂົ້າຮ່ວມຝຶກອົບຮົມກ່ຽວກັບການນໍາໃຊ້ເຄື່ອງມືສະເພາະ, ອຸປະກອນ, ສື່ ແລະ ເຕັກໂນໂລຊີທີ່ກ່ຽວຂ້ອງ ແລະ ຄວນອໍານວຍຄວາມສະດວກໃນການເຂົ້າເຖິງຊັບພະຍາກອນ, ລະບົບອິນເຕີເນັດ, ແບ່ງປັນເອກະສານ ແລະ ສື່ສານພາຍໃນອອກສູ່ພາຍນອກຢ່າງມີປະສິດທິພາບ.

3.3 ຜົນການວິເຄາະການປະເມີນແນວທາງໃນການພັດທະນາທັກສະຂອງຜູ້ບໍລິຫານໃນຍຸກສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ພົບວ່າ ມີຄວາມເໝາະສົມ ແລະ ເປັນໄປໄດ້ໃນ ລະດັບຫຼາຍທັງສອງດ້ານ ໂດຍມີຄ່າ $\mu = 4.34$; $\sigma = 0.41$ ແລະ $\mu = 4.33$; $\sigma = 0.42$ ຕາມລໍາດັບ.

## 4. ວິພາກຜົນ

4.1 ສະພາບການພັດທະນາທັກສະຂອງຜູ້ບໍລິຫານໃນຍຸກສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ

ຈາກການຄົ້ນຄວ້າກ່ຽວກັບ ສະພາບການພັດທະນາທັກສະຂອງຜູ້ບໍລິຫານໃນສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ ໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນແຕ່ລະດ້ານພົບວ່າທຸກດ້ານຢູ່ໃນລະດັບຫຼາຍທຸກດ້ານ ລຽງຄ່າສະເລ່ຍແຕ່ສູງຫາໜ້ອຍຄື: ທັກສະດ້ານການສື່ສານ, ດ້ານທັກສະດ້ານມະນຸດສໍາພັນ, ທັກສະດ້ານການຄິດວິເຄາະ ແລະ ຄວາມຄິດສ້າງສັນ ແລະ ດ້ານທີ່ໜ້ອຍທີ່ສຸດແມ່ນ ທັກສະດ້ານການໃຊ້ເຕັກໂນໂລຊີ ແລະ ດິຈິຕອນ. ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ ອິນທະຫວາ (2025) ໄດ້ສຶກສາຄົ້ນຄວ້າກ່ຽວກັບທັກສະຂອງຜູ້ບໍລິຫານການສຶກສາ ໃນສະຕະວັດທີ່ 21 ຂອງໂຮງຮຽນ ມັດທະຍົມສຶກສາສົມບູນ ພາກເອກະຊົນ ເມືອງໄຊທານີ ນະຄອນຫຼວງວຽງຈັນ ເຊິ່ງຜົນການຄົ້ນຄວ້າແມ່ນຢູ່ໃນລະດັບຫຼາຍ, ຍັງສອດຄ່ອງກັບບົດຄົ້ນຄວ້າຂອງ ອິນທະວົງ (2023) ໄດ້ສຶກສາຄົ້ນຄວ້າກ່ຽວກັບແນວທາງການພັດທະນາທັກສະຂອງຜູ້ບໍລິຫານໂຮງຮຽນໃນສະຕະວັດທີ 21 ຂອງໂຮງຮຽນມັດທະຍົມສົມບູນ ພາກເອກະຊົນ, ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ຜົນການຄົ້ນຄວ້າແມ່ນຢູ່ໃນລະດັບຫຼາຍ ແລະ ສອດຄ່ອງກັບບົດຄົ້ນຄວ້າຂອງ ວັນນາ (2019) ທີ່ໄດ້ສຶກສາກ່ຽວກັບທັກສະຂອງຜູ້ບໍລິຫານການສຶກສາ ໃນສະຕະວັດທີ່ 21 ຊຶ່ງຜົນການຄົ້ນຄວ້າແມ່ນຢູ່ໃນລະດັບຫຼາຍເຊັ່ນກັນ.

4.2 ແນວທາງໃນການພັດທະນາທັກສະຂອງຜູ້ບໍລິຫານໃນຍຸກສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ

1) ທັກສະດ້ານການສື່ສານ: ທັກສະຂອງຜູ້ບໍລິຫານ ໃນສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ໃນທັກສະດ້ານການສື່ສານ ເຫັນໄດ້ວ່າ ໂດຍລວມແມ່ນຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ ຜູ້ບໍລິຫານໂຮງຮຽນ ມີຂະບວນການຖ່າຍທອດ

ຂ່າວ, ຂໍ້ມູນຂ່າວສານ, ຄວາມຮູ້ ແລະ ປະສົບການທີ່ຖືກຕ້ອງໄດ້ເປັນຢ່າງດີ ແລະ ຜູ້ບໍລິຫານໂຮງຮຽນ ສ້າງໂອກາດໃຫ້ຄູ-ອາຈານ ແລະ ບຸກຄະລາກອນໃນທຸກພາກສ່ວນໄດ້ເຮັດວຽກຮ່ວມກັນເປັນທີມເພື່ອສ້າງຈິດສຳນຶກ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ ສ້າງຄວາມສາມັກຄີໃນສະຖາບັນການສຶກສາ ເຊິ່ງສອດຄ່ອງກັບບົດຄົ້ນຄ້ວາຂອງ ວັນນາ (2019) ໄດ້ສຶກສາກ່ຽວກັບແນວທາງການພັດທະນາທັກສະການບໍລິຫານຂອງຜູ້ບໍລິຫານສະຖານສຶກສາ ສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາ ເຂດ 4 ຜົນການຄົ້ນຄວ້າແມ່ນຢູ່ໃນລະດັບຫຼາຍ ແລະ ສອດຄ່ອງກັບບົດຄົ້ນຄ້ວາຂອງອັງຄຸຣະສີ (2022) ໄດ້ສຶກສາກ່ຽວກັບທັກສະຂອງຜູ້ບໍລິຫານສະຖານສຶກສາໃນສະຕະວັດທີ 21 ສັງກັດສຳນັກງານເຂດພື້ນທີ່ການສຶກສາໂຮງຮຽນປະຖົມສຶກສາສິງຂາເຂດ 2 ເຊິ່ງຜົນຂອງການຄົ້ນຄ້ວາໂດຍລວມແມ່ນຢູ່ໃນລະດັບຫຼາຍ.

2) ທັກສະດ້ານມະນຸດສຳພັນ: ທັກສະຂອງຜູ້ບໍລິຫານໃນສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ໃນທັກສະດ້ານມະນຸດສຳພັນ ເຫັນໄດ້ວ່າ ໂດຍລວມແມ່ນຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ ຜູ້ບໍລິຫານໂຮງຮຽນ ມີທັກສະໃນການສ້າງຄວາມສຳພັນທີ່ດີ ກັບເພື່ອນຮ່ວມງານ, ຜູ້ບໍລິຫານໂຮງຮຽນ ມີຄວາມຈິງໃຈໃນການໃຫ້ຄຳປຶກສາ ແລະ ແນະນຳວຽກງານໃຫ້ພະນັກງານກ່ຽວກັບຄວາມຮັບຜິດຊອບຂອງຕົນ ແລະ ຜູ້ບໍລິຫານໂຮງຮຽນ ມີທັກສະໃນການເຮັດວຽກເປັນທີມ ຮ່ວມກັບສະມາຊິກ ແລະ ບຸກຄົນອື່ນໄດ້ຢ່າງມີປະສິດທິພາບ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງລອດໄພບູນ (2012) ໄດ້ສຶກສາກ່ຽວກັບທັກສະການບໍລິຫານໃນສະຕະວັດທີ 21 ຂອງຜູ້ບໍລິຫານສະຖາບັນການສຶກສາ ສັງກັດສຳນັກງານເຂດພື້ນທີ່ການສຶກສາ ໂຮງຮຽນ ມັດທະຍົມສຶກສາສະແກ້ວ ຜົນການຄົ້ນຄວ້າແມ່ນຢູ່ໃນລະດັບຫຼາຍ ແລະ ສອດຄ່ອງກັບທິດສະດີຂອງສະນອງຜົນ (2014, ໜ້າ. 31) ໄດ້ກ່າວວ່າ ທັກສະດ້ານມະນຸດຫມາຍເຖິງ ຜູ້ບໍລິຫານ ມີຄວາມຍືດຫຍຸ່ນ ແລະ ເຂົ້າໃຈຄວາມແຕກຕ່າງລະຫວ່າງພຶດຕິກຳ ແລະ ວັດທະນະທຳ, ມີມະນຸດສຳພັນດີກັບເພື່ອນຮ່ວມງານທຸກຂັ້ນ, ເຄົາລົບ ແລະ ໃຫ້ກຽດເຊິ່ງກັນ ແລະ ກັນ.

3) ທັກສະການຄິດວິເຄາະ ແລະ ຄວາມຄິດສ້າງສັນ: ທັກສະຂອງຜູ້ບໍລິຫານໃນສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ໃນທັກສະການຄິດວິເຄາະ ແລະ ຄວາມຄິດສ້າງສັນ ເຫັນໄດ້ວ່າ ໂດຍລວມແມ່ນຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ : ຜູ້ບໍລິຫານໂຮງຮຽນ ເປັນຕົວຢ່າງໃນການນຳເອົາແນວຄວາມຄິດໃໝ່ ເພື່ອນຳໃຊ້ເຂົ້າໃນການເຮັດວຽກ ແລະ ຜູ້ບໍລິຫານໂຮງຮຽນ ມີການຕັດສິນບັນຫາຢ່າງວອງໄວ ແລະ ຖືກຈຸດ ເຊິ່ງສອດຄ່ອງກັບບົດຄົ້ນຄ້ວາຂອງ Binkley (2012) ໄດ້ສຶກສາຜົນສຳເລັດຂອງການບໍລິຫານໂຮງຮຽນມັດທະຍົມແລະພົບວ່າຄວາມສຳເລັດຂອງຜູ້ບໍລິຫານແມ່ນຂຶ້ນກັບທັກສະ, ຄວາມຮູ້ແລະປະສົບການຂອງເຂົາເຈົ້າໃນການຄຸ້ມຄອງ ຜົນການຄົ້ນຄ້ວາແມ່ນຢູ່ໃນລະດັບຫຼາຍ ແລະ ສອດຄ່ອງກັບທິດສະດີຂອງເພັນຈິດ (2015, ໜ້າ. 7) ທັກສະດ້ານການລິເລີ່ມສ້າງສັນ ແລະ ການເປັນຕົວເອງ ແມ່ນຜູ້ທີ່ມີຄວາມຄິດສ້າງສັນ ແລະ ເປັນຜູ້ນຳໃນທຸກໆດ້ານ ສຸມໃສ່ຄວາມຊຳນານດ້ານທັກສະ ແລະ ຄວາມຮູ້ທາງປັນຍາ ເພື່ອການພັດທະນາ ແລະ ເປັນຜູ້ລິເລີ່ມສ້າງສັນໃນດ້ານການສື່ສານ ເປີດກວ້າງທັດສະນະໃຫມ່ທີ່ຫຼາກຫຼາຍ ເພື່ອຄວາມກ້າວໜ້າໃນອະນາຄົດ.

4) ທັກສະດ້ານເຕັກໂນໂລຊີ ແລະ ດີຈິຕອນ: ທັກສະຂອງຜູ້ບໍລິຫານໃນສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ໃນທັກສະດ້ານເຕັກໂນໂລຊີ ແລະ ດີຈິຕອນ ເຫັນໄດ້ວ່າ ໂດຍລວມແມ່ນຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ ຜູ້ບໍລິຫານໂຮງຮຽນ ມີຄວາມສາມາດນຳໃຊ້ເຕັກໂນໂລຊີສື່ສານທາງອອນລາຍ ເຊັ່ນ: WhatsApp ເປັນຕົ້ນ ແລະ ຜູ້ບໍລິຫານໂຮງຮຽນ ມີທັກສະນຳເຕັກໂນໂລຊີມາ ໃຊ້ໃນການເກັບຮັກສາຂໍ້ມູນຂ່າວສານ ຂອງສະຖາບັນໃນລະບົບອິນເຕີເນັດຢ່າງເປັນລະບົບ ເຊິ່ງສອດຄ່ອງກັບບົດຄົ້ນຄ້ວາຂອງ Watson (2000) ໄດ້ດຳເນີນການສຶກສາຄົ້ນຄວ້າກ່ຽວກັບຄວາມເປັນຜູ້ນຳໃນສະຕະວັດທີ 21 ໂດຍອີງໃສ່ຄວາມຮັບຮູ້ຂອງຜູ້ນຳ. ໃນພາກເອກະຊົນໃນປະເທດການາດາ ຜົນຂອງການຄົ້ນຄວ້າໂດຍລວມແມ່ນຢູ່ໃນລະດັບຫຼາຍ ແລະ ສອດຄ່ອງກັບທິດສະດີຂອງ Weigel (2012, p. 301) ທັກສະດ້ານເຕັກໂນໂລຊີ ແລະ ການນຳໃຊ້ດີຈິຕອນ (Technological and Digital Literacy Skills) ແມ່ນຄວາມສາມາດໃນການນຳໃຊ້ເຄື່ອງມື, ອຸປະກອນ ແລະ ເຕັກໂນໂລຊີດີຈິຕອນທີ່ມີຢູ່ໃນປັດຈຸບັນ ເພື່ອນຳໃຊ້ເພື່ອຜົນປະໂຫຍດສູງສຸດໃນການສື່ສານ, ການເຮັດວຽກ ແລະ ຮັດວຽກຮ່ວມກັນ ຫຼື ໃຊ້ເພື່ອພັດທະນາຂະບວນການເຮັດວຽກ ຫຼື ລະບົບການເຮັດວຽກໃນອົງກອນໃຫ້ທັນສະໄໝ ແລະ ມີປະສິດທິພາບ.

4.3 ຜົນການວິເຄາະການປະເມີນແນວທາງໃນການພັດທະນາທັກສະຂອງຜູ້ບໍລິຫານໃນຍຸກສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ

ຜົນການປະເມີນແນວທາງໃນການພັດທະນາທັກສະຂອງຜູ້ບໍລິຫານໃນຍຸກສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ພົບວ່າ ແນວທາງທີ່ສະເໜີຂຶ້ນມາມີຄວາມເໝາະສົມ ແລະ ເປັນໄປໄດ້ຢູ່ໃນລະດັບຫຼາຍ ໂດຍມີຄ່າສະເລ່ຍ 4.33 ແລະ ຄ່າຜັນປ່ຽນມາດຕະຖານ 0.42. ຜົນດັ່ງກ່າວສະທ້ອນວ່າ ແນວທາງທີ່ພັດທະນາຂຶ້ນມີເນື້ອໃນສອດຄ່ອງກັບສະພາບຈິງ ແລະ ສາມາດນຳໄປໃຊ້ເປັນແນວທາງໃນການພັດທະນາຜູ້ບໍລິຫານໂຮງຮຽນໄດ້. ຜົນການປະເມີນນີ້ສອດຄ່ອງກັບແນວຄິດຂອງ Binkley (2012) ທີ່ເນັ້ນວ່າ ຜູ້ບໍລິຫານຄວນມີທັກສະສຳຄັນ 3 ດ້ານ ຄື ທັກສະດ້ານເຕັກນິກ, ທັກສະດ້ານມະນຸດ ແລະ ທັກສະດ້ານຄວາມຄິດຮອບຍອດ. ໂດຍສະເພາະ ທັກສະດ້ານມະນຸດກ່ຽວຂ້ອງກັບການສື່ສານ, ການສ້າງສາຍສຳພັນ, ການເຮັດວຽກຮ່ວມກັນ ແລະ ການຈູງໃຈບຸກຄະລາກອນ ເຊິ່ງສອດຄ່ອງກັບແນວທາງໃນການສຶກສາຄັ້ງນີ້ທີ່ເນັ້ນການສື່ສານ, ມະນຸດສຳພັນ, ການຄິດວິເຄາະ-ສ້າງສັນ ແລະ ການໃຊ້ເຕັກໂນໂລຊີ. ນອກຈາກນັ້ນ ຍັງສອດຄ່ອງກັບ ວັນນາ (2019) ທີ່ເນັ້ນທັກສະສຳຄັນຂອງສະຕະວັດທີ 21 ເຊັ່ນ ການສື່ສານ, ການຄິດ, ການແກ້ໄຂບັນຫາ ແລະ ການນຳໃຊ້ດີຈິຕອນ. ທັກສະທັງ 4 ດ້ານທີ່ກຳນົດ

ໃນການສຶກສາກໍສອດຄ່ອງກັບກອບແນວຄິດທັກສະສະຕະວັດທີ 21 ທີ່ໃຊ້ເປັນພື້ນຖານ ແລະ ຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງ ອັງຄຸຣະສີ (2022) ທີ່ສຶກສາກ່ຽວກັບທັກສະຂອງຜູ້ບໍລິຫານໃນສະຕະວັດທີ 21 ແລະ ເນັ້ນໃຫ້ເຫັນຄວາມສຳຄັນຂອງການສື່ສານ, ມະນຸດສຳພັນ, ການຄິດວິເຄາະ, ຄວາມຄິດສ້າງສັນ ແລະ ການປັບຕົວຕາມການປ່ຽນແປງ. ໂດຍຜົນການສຶກສາໃນຄັ້ງນີ້ພົບວ່າ ທັກສະທັງ 4 ດ້ານຢູ່ໃນລະດັບຫຼາຍ ແລະ ແນວທາງທີ່ສະເໜີຂຶ້ນໄດ້ຮັບການປະເມີນວ່າມີຄວາມເໝາະສົມ ແລະ ເປັນໄປໄດ້ໃນລະດັບຫຼາຍ. ດັ່ງນັ້ນ ສາມາດສະຫຼຸບໄດ້ວ່າ ແນວທາງດັ່ງກ່າວມີພື້ນຖານທາງທິດສະດີ ແລະ ຜົນການຄົ້ນຄວ້າຮອງຮັບ ແລະ ມີທ່າແຮງທີ່ຈະນຳໄປປະຍຸກຕໃຊ້ໃນການພັດທະນາຜູ້ບໍລິຫານໂຮງຮຽນໃນເມືອງສີໂຄດຕະບອງໄດ້. ເພາະຜົນການປະເມີນໃນການສຶກສາຄັ້ງນີ້ຢືນຢັນວ່າ ແນວທາງທີ່ສະເໜີມີທັງຄວາມເໝາະສົມ ແລະ ຄວາມເປັນໄປໄດ້ໃນການນຳໄປປະຕິບັດ.

## 5. ສະຫຼຸບ

ການສຶກສາແນວທາງການພັດທະນາທັກສະຂອງຜູ້ບໍລິຫານ ໃນຍຸກສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ ສະຫຼຸບໄດ້ດັ່ງນີ້:

1) ສະພາບການພັດທະນາທັກສະການບໍລິຫານຂອງຜູ້ບໍລິຫານໂຮງຮຽນມັດທະຍົມສຶກສາ ໃນຍຸກສະຕະ ວັດທີ 21 ເມືອງສີໂຄດຕະບອງ ນະຄອນ ຫຼວງວຽງຈັນ ພົບວ່າ ໂດຍລວມຢູ່ໃນລະດັບຫຼາຍ. ເຊິ່ງເຫັນວ່າ ທຸກດ້ານ ຢູ່ໃນລະດັບຫຼາຍ ລຽງຈາກຄ່າສະເລ່ຍສູງຫາໜ້ອຍ ຄື: ທັກສະດ້ານການສື່ສານ, ທັກສະດ້ານການຄິດວິເຄາະ ແລະ ຄວາມຄິດສ້າງສັນ, ທັກສະດ້ານມະນຸດສຳພັນ ແລະ ທັກສະດ້ານເຕັກໂນໂລຊີ ແລະ ດິຈິຕອນ.

2) ແນວທາງພັດທະນາທັກສະການບໍລິຫານຂອງຜູ້ບໍລິຫານໂຮງຮຽນມັດທະຍົມສຶກສາ ໃນຍຸກສະຕະວັດທີ 21 ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ພົບວ່າ ມີ 4 ດ້ານ ຄື (1) ດ້ານທັກສະການສື່ສານ: ຜູ້ບໍລິຫານຄວນພັດທະນາທັກສະການສື່ສານ ແລະ ພາສາອັງກິດ ໂດຍການຝຶກອົບຮົມ, ຮັບຟັງຢ່າງຕັ້ງໃຈ, ຮູ້ຈັກແກ້ໄຂຂໍ້ຂັດແຍ່ງ, ກວດສອບຄວາມນ່າເຊື່ອຖືຂອງຂໍ້ມູນ ແລະ ນຳໃຊ້ເຕັກໂນໂລຊີໃນການສື່ສານ ພ້ອມທັງສ້າງລະບົບພີ່ລ້ຽງ ແລະ ເວທີແລກປ່ຽນປະສົບການ, (2) ດ້ານທັກສະມະນຸດສຳພັນ: ຜູ້ບໍລິຫານຄວນສ້າງຄວາມສຳພັນທີ່ດີກັບບຸກຄະລາກອນ, ເປີດກວ້າງຮັບຟັງຄວາມຄິດເຫັນ, ເຂົ້າໃຈຈຸດແຂງ ແລະ ຄວາມຕ້ອງການຂອງແຕ່ລະຄົນ, ສົ່ງເສີມການຮ່ວມມື, ການແລກປ່ຽນຮຽນຮູ້ ແລະ ສ້າງເຄືອຂ່າຍກັບໂຮງຮຽນ, ຊຸມຊົນ ແລະ ພາກສ່ວນກ່ຽວຂ້ອງ, (3) ດ້ານການຄິດວິເຄາະ ແລະ ແນວຄິດສ້າງສັນ: ຜູ້ບໍລິຫານຄວນຝຶກການກຳນົດບັນຫາ, ວິເຄາະສາເຫດ ແລະ ແກ້ໄຂບັນຫາໂດຍອີງໃສ່ຂໍ້ມູນ, ນຳໃຊ້ເຄື່ອງມືວິເຄາະ, ຈັດສະຖານະການຈຳລອງເພື່ອຝຶກຄິດແກ້ບັນຫາ ແລະ ສົ່ງເສີມການຄິດສ້າງສັນໂດຍຮຽນຮູ້ຈາກຜູ້ຊ່ຽວຊານ ແລະ (4) ດ້ານການໃຊ້ເຕັກໂນໂລຊີ ແລະ ດິຈິຕອນ: ຜູ້ບໍລິຫານຄວນສົ່ງເສີມການນຳໃຊ້ເຄື່ອງມືດິຈິຕອນ ເຊັ່ນ Google Docs, Google Sheets ແລະ Microsoft Teams, ຈັດຝຶກອົບຮົມພັດທະນາທັກສະ, ຈັດຫາອຸປະກອນ ແລະ ລະບົບອິນເຕີເນັດທີ່ພຽງພໍ ພ້ອມທັງນຳໃຊ້ເຕັກໂນໂລຊີໃນການປະຊຸມ, ສື່ສານ, ແບ່ງປັນຂໍ້ມູນ ແລະ ເຮັດວຽກຮ່ວມກັນ.

3) ການປະເມີນແນວທາງໃນການພັດທະນາທັກສະຂອງຜູ້ບໍລິຫານໃນຍຸກສະຕະວັດທີ 21 ໂຮງຮຽນມັດທະຍົມສຶກສາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ພົບວ່າ ມີຄວາມເໝາະສົມ ແລະ ເປັນໄປໄດ້ໃນລະດັບຫຼາຍທັງສອງດ້ານ ໂດຍມີຄ່າ $\mu = 4.34$; $\sigma = 0.41$ ແລະ $\mu = 4.33$; $\sigma = 0.42$ ຕາມລຳດັບ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງ ທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບ ພາກສ່ວນໃດພາກສ່ວນໜຶ່ງ, ກໍ ລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2016). ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025. ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ. (2020). ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5ປີ ຄັ້ງທີ IX (2021-2025). ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງແຜນການ ແລະ ການລົງທຶນ. (2021). ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX 2021-2025. ນະຄອນຫຼວງວຽງຈັນ.

ສີສະອາດ, ບ. (2011). ການວິໄຈເບື້ອງຕົ້ນ (ສະບັບປັບປຸງໃໝ່). ກຸງເທບມະຫານະຄອນ: ສຸວີລິຍະສານ ພິມຄັ້ງທີ 9.

ສະນອງຜັນ, ພ. (2014). ທັກສະຜູ້ບໍລິຫານສະຖານການສຶກສາໃນສະຕະວັດທີ 21 ສັງກັດສໍານັກງານເຂດພື້ນທີ່ການສຶກສາປະຖົມສຶກສາອຸດອນທານີ ເຂດ 3. ຂອນແກ່ນ: ມະຫາວິທະຍາໄລຂອນແກ່ນ.

ລອດໄພບູນ, ນ. (2012). ທັກສະການບໍລິຫານໃນສະຕະວັດທີ 21 ຂອງຜູ້ບໍລິຫານສະຖາບັນການສຶກສາ ສັງກັດສໍານັກງານເຂດພື້ນທີ່ການສຶກສາໂຮງຮຽນ ມັດທະຍົມສຶກສາສະແກ້ວ. ມະຫາວິທະຍາໄລບູລະພາ: ວິທະຍານິພົນປະລິນຍາສຶກສາສາດມະຫາບັນດິດ ສາຂາການບໍລິຫານການສຶກສາ.

ວັນນາ, ພ. (2019). ແນວທາງການພັດທະນາທັກສະການບໍລິຫານຂອງຜູ່ບໍລິຫານສະຖານສຶກສາ ສັງກັດສໍານັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາ ເຂດ 4. ວິທະຍານິພົນປະລິນຍາສຶກສາສາດມະຫາບັນດິດ ສາຂາການບໍລິຫານການສຶກສາ: ມະຫາວິທະຍາໄລເທັກໂນໂລຊີລາດຊະມົງຄົນທັນບູຣີ.

ຫ້ອງການສຶກສາທິການ ແລະ ກິລາ ເມືອງ ສີໂຄດຕະບອງ. (2025). ບົດສະຫຼຸບປະຈໍາປີ (2025-2026). ນະຄອນຫຼວງວຽງຈັນ: ຫ້ອງການສຶກສາທິການ ແລະ ກິລາ ເມືອງ ສີໂຄດຕະບອງ.

ອັງຄຸຣະສີ, ສ. (2022). ທັກສະຂອງຜູ້ບໍລິຫານສະຖານສຶກສາໃນສະຕະວັດທີ 21 ສັງກັດສໍານັກງານເຂດພື້ນທີ່ການສຶກສາ ໂຮງຮຽນປະຖົມສຶກສາສິງຂາເຂດ 2. ມະຫາວິທະຍາໄລຫາດໃຫຍ່: ວິທະຍານິພົນປະລິນຍາສຶກສາສາດມະຫາບັນດິດ ສາຂາການບໍລິຫານການສຶກສາ.

ອິນທະວົງ, ອ. (2023). ແນວທາງການພັດທະນາທັກສະຂອງຜູ້ບໍລິຫານໂຮງຮຽນໃນສະຕະວັດທີ 21 ຂອງໂຮງຮຽນມັດທະຍົມສົມບູນ ພາກເອກະຊົນ, ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ. ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ: ປະລິນຍາໂທສຶກສາສາດ ສາຂາບໍລິຫານການສຶກສາ.

ເພີນຈິດ, ສ. (2015). ທັກສະການບໍລິຫານໃນສະຕະວັດທີ 21 ຂອງຜູ່ບໍລິຫານສະຖານສຶກສາຂັ້ນພື້ນຖານ. ມະຫາວິທະຍາຣາດຊະພັດການຈະນະບູລີ: ວິທະຍານິພົນປະລິນຍາມິຫາບັນດິດ.

Binkley, M. (2012). *Assessment and Teaching of 21st Century Skills.* Springer Netherlands. doi:10.1007/978-94-007-2324-5_2

Tony, W. (2008). *The Global Achievement Gap.* n.a: Harvard Change Leadership Group.

Watson, S. H. (2000). *Leadership Requirements in the 21 st Century: The perceptions of Canadian Private Sector Leaders.* Andrews University. Retrieved from https://dx.doi.org/10.32597/dissertations/1531/

Weigel, K. (2012 ). Preparing School Leaders: 21st Century Skills and NationalAssociation of Secondary School Principals (NASSP). *Management Skills for the 21st Century: Avis Gaze*, 301.